**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ອົງການກວດສອບແຫ່ງລັດ ນະຄອນຫຼວງວຽງຈັນ, ວັນທີ:

# ສັງລວມຜົນການກວດສອບ ຄວາມພ້ອມໃນການຈັດຕັ້ງປະຕິບັດເປົ້າໝາຍພັດທະນາແບບຍືນຍົງ (SDG)

- ອີງຕາມກົດໝາຍວ່າດ້ວຍການກວດສອບແຫ່ງລັດ (ສະບັບປັບປຸງ) ສະບັບເລກທີ 09/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມບົດແຈ້ງຜົນກວດສອບການກະກຽມຄວາມພ້ອມໃນການຈັດຕັ້ງປະຕິບັດເປົ້າໝາຍພັດທະນາແບບຍືນຍົງ ຢູ່ ສປປ ລາວ ສະບັບ ເລກທີ 13/ກງ, ລົງວັນທີ 09 ມັງກອນ 2020;
- ອີງຕາມບົດບັນທຶກຜົນການກວດສອບການກະກຽມຄວາມພ້ອມໃນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ຢູ່ ສປປ ລາວ ສະບັບລົງວັນທີ 03 ຕຸລາ 2019.

ອົງການກວດສອບແຫ່ງລັດ ໄດ້ດຳເນີນການກວດສອບການກະກຽມຄວາມພ້ອມໃນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ຢູ່ ສປປ ລາວ (SDG) ໂດຍປະຕິບັດຕາມຫຼັກການເຄື່ອນໄຫວກວດສອບແຫ່ງລັດ ຕາມມາດຕາ 5 ຂອງກົດໝາຍວ່າດ້ວຍ ການກວດສອບແຫ່ງລັດ ແລະ ໄດ້ດຳເນີນຂັ້ນຕອນການເກັບກຳຂໍ້ມູນ, ວາງແຜນ, ດຳເນີນການກວດສອບ ແລະ ສະຫຼຸບຜົນການກວດສອບ ໃຫ້ສອດຄ່ອງກັບກົດໝາຍ ແລະ ມາດຕະຖານການກວດສອບແຫ່ງລັດ ທີ່ໄດ້ກຳນົດໄວ້, ຜົນການກວດສອບ ມີເນື້ອໃນທີ່ພົ້ນເດັ່ນດັ່ງນີ້:

## I. ຜົນການກວດສອບການກະກຽມຄວາມພ້ອມໃນການຈັດຕັ້ງປະຕິບັດ SDG ຢູ່ ສປປ ລາວ

### ກ. ດ້ານຕັ້ງໜ້າ

1. ການນຳຂັ້ນສູງຂອງ ສປປ ລາວ ໄດ້ໃຫ້ຄວາມສຳຄັນໃນການຈັດຕັ້ງປະຕິບັດ SDG, ຊຶ່ງໄດ້ແຕ່ງຕັ້ງຄະນະຊີ້ນຳລະດັບຊາດ ເພື່ອຊີ້ນຳການຈັດຕັ້ງປະຕິບັດ SDG ໂດຍການເປັນປະທານຂອງ ທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ ແລະ ປະກອບມີບັນດາລັດຖະມົນຕີຂອງບັນດາກະຊວງເປັນຄະນະ. ມີການແຕ່ງຕັ້ງກອງເລຂາຄະນະຊີ້ນຳລະດັບຊາດ ແລະ ຈຸດປະສານງານຂອງແຕ່ລະກະຊວງ, ອົງການຈັດຕັ້ງມະຫາຊົນ ແລະ ອົງການລັດທຽບເທົ່າກະຊວງ ເຂົ້າຮ່ວມຢ່າງກວ້າງຂວາງ;

2. ຕົວຊີ້ບອກເປົ້າໝາຍພັດທະນາແບບຍືນຍົງສາກົນ ແມ່ນໄດ້ຮັບການພິຈາລະນາ ແລະ ເຊື່ອມສານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ແລະ ມີແຜນຈະສືບຕໍ່ເຊື່ອມສານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ແລະ ຄັ້ງທີ X ໃນອະນາຄົດໃຫ້ສຳເລັດ;

3. ສຳລັບຫ້ອງການກອງເລຂາຄະນະຊີ້ນຳລະດັບຊາດ SDG ແມ່ນຕັ້ງຢູ່ ກົມອົງການຈັດຕັ້ງສາກົນ, ກະຊວງການຕ່າງປະເທດ ເພື່ອດຳເນີນວຽກງານຕາມຂອບເຂດສິດ, ພາລະບົດບາດ ແລະ ໜ້າທີ່ຂອງຕົນໃນນາມເປັນຂອດໃຈກາງໃນການປະສານງານ ເພື່ອສະຫຼຸບສັງລວມ ແລະ ລາຍງານຜົນການຈັດຕັ້ງປະຕິບັດ SDG ໃນ ສປປ ລາວ;

4. ກອງເລຂາຄະນະຊີ້ນຳລະດັບຊາດ ໄດ້ມີການຈັດກອງປະຊຸມຫຼາຍຄັ້ງ ທັງຢູ່ສູນກາງ ແລະ ຢູ່ຕ່າງແຂວງຂອງພາກເໜືອ, ກາງ ແລະ ໃຕ້ ໂດຍໄດ້ເຜີຍແຜ່ ຫຼື ສອດທ້ອຍວຽກງານເປົ້າໝາຍພັດທະນາແບບຍືນຍົງເຂົ້າໃນກອງປະຊຸມຂັ້ນຕ່າງໆ ເພື່ອເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມຮັບຮູ້ ແລະ ເຂົ້າໃຈຂັ້ນພື້ນຖານກ່ຽວກັບຄວາມສຳຄັນວຽກງານຂອງ SDG. ນອກນັ້ນ ຍັງໄດ້ຮັບການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນຈຳນວນໜຶ່ງ ໃນການຈັດພິມອຸປະກອນໂຄສະນາ ເຊັ່ນ: ປຶ້ມ, ແຜ່ນພັບ, ເສື້ອ, ໝວກ ແລະ ສິ່ງອື່ນໆ;

5. ໄດ້ມີກົນໄກການປະສານງານ ຜ່ານຫຼາຍຊ່ອງທາງເຊັ່ນ: ການຈັດກອງປະຊຸມລະດັບວິຊາການ, ການຈັດກອງປະຊຸມລະດັບຈຸດປະສານງານ, ການຈັດກອງປະຊຸມລະດັບສູງ ແລະ ການຈັດກອງປະຊຸມເປີດກວ້າງກັບຫຼາຍພາກສ່ວນ ແລະ ອົງການທີ່ບໍ່ສັງກັດລັດຖະບານ. ພ້ອມກັນນັ້ນ, ຫຼາຍໜ້າວຽກໄດ້ຮັບການສືບຕໍ່ປຶກສາຫາລືເປັນຕົ້ນວຽກການເຊື່ອມສານຕົວຊີ້ບອກ, ວຽກງານການວາງແຜນຕິດຕາມ, ກວດກາ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດ SDG ຂອງກະຊວງ ແລະ ອົງການຂັ້ນສູນກາງ;

6. ບັນດາກິດຈະກຳໄລຍະຜ່ານມາຂອງກອງເລຂາ SDG ແຫ່ງຊາດ ແມ່ນໄດ້ຮັບການສະໜັບສະໜູນຈາກອົງການສະຫະປະຊາຊາດ ແລະ ບັນດາຄູ່ຮ່ວມພັດທະນາຕ່າງໆ;

7. ພະນັກງານຈຳນວນໜຶ່ງໄດ້ເຂົ້າຮ່ວມກອງປະຊຸມ, ສຳມະນາ ແລະ ການຝຶກອົບຮົມທັງພາຍໃນ ແລະ ຢູ່ຕ່າງປະເທດ ເພື່ອຍົກສູງລະດັບຄວາມສາມາດດ້ານວິຊາການໃຫ້ຄະນະຮັບຜິດຊອບໄດ້ນຳມາໝູນໃຊ້ເຂົ້າໃນວຽກງານຕົວຈິງ;

8. ກອງເລຂາ ແລະ ຈຸດປະສານງານຂອງແຕ່ລະກະຊວງ ໄດ້ກຳນົດກົນໄກການລາຍງານແບບສະໝັກໃຈ ຫຼື Voluntary National Review (VNR) ເພື່ອລາຍງານການຈັດຕັ້ງປະຕິບັດ SDG ໃຫ້ອົງການສະຫະປະຊາຊາດ ໃນແຕ່ລະໄລຍະ;

9. ໄດ້ສ້າງແຜນປະຕິບັດງານແຫ່ງຊາດ ເພື່ອການຈັດຕັ້ງປະຕິບັດວາລະປີ 2030 ເພື່ອການພັດທະນາແບບຍືນຍົງ ຢູ່ ສປປ ລາວ (National Roadmap for the Implementation of the 2030 Agenda for Sustainable Development) ແລະ ແຜນດຳເນີນງານແຫ່ງຊາດ ເພື່ອການສື່ສານ, ການເຜີຍແຜ່ ແລະ ໂຄສະນາ (National SDG Communication Workplan for the Implementation of the 2030 Agenda for Sustainable Development) ຂຶ້ນເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ SDG ໃຫ້ເກີດດອກອອກຜົນນັບແຕ່ນີ້ຮອດປີ 2030.

**ຂ. ດ້ານຄົງຄ້າງ**

1. ກວດສອບເຫັນ ການເຊື່ອມສານບັນດາຄາດໝາຍ ແລະ ຕົວຊີ້ບອກ ຈຳນວນໜຶ່ງ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII ຍັງບໍ່ທັນຄົບຖ້ວນ. ການຜັນຂະຫຍາຍນະໂຍບາຍທີ່ໄດ້ຮັບການເຊື່ອມສານແລ້ວລົງສູ່ຂັ້ນທ້ອງຖິ່ນຮາກຖານຍັງປະຕິບັດບໍ່ທັນໄດ້ດີ, ຊັກຊ້າ ຊຶ່ງສາເຫດແມ່ນຍ້ອນຂໍ້ຈຳກັດດ້ານວິຊາການ;

2. ກວດສອບເຫັນ ການເຜີຍແຜ່ ແລະ ໂຄສະນາ ກ່ຽວກັບ SDG ຢູ່ ສປປ ລາວ ຍັງບໍ່ທັນກວ້າງຂວາງ ເຮັດໃຫ້ປະຊາຊົນບໍ່ສາມາດເຂົ້າເຖິງຂໍ້ມູນ ແລະ ນຳໄປຈັດຕັ້ງປະຕິບັດ ບໍ່ໄດ້ດີເທົ່າທີ່ຄວນ;

3. ກວດສອບເຫັນ ການສ້າງຂີດຄວາມສາມາດໃຫ້ແກ່ພະນັກງານໃນກອງເລຂາຄະນະຊີ້ນຳລະດັບຊາດ ແລະ ຈຸດປະສານງານ ທີ່ຂື້ນກັບບັນດາກະຊວງ-ຂະແໜງການ ເພື່ອສ້າງຄວາມເຂັ້ມແຂງໃນການຕິດຕາມ, ກວດກາ, ປະເມີນ ແລະ ລາຍງານ ຜົນຂອງການຈັດຕັ້ງປະຕິບັດບັນດາແຜນງານ ແລະ ໂຄງການ ທີ່ຕິດພັນກັບ SDG ຍັງປະຕິບັດໄດ້ໜ້ອຍ ແລະ ງົບປະມານບໍລິຫານວຽກງານ ມີຈຳກັດ;

4. ກວດສອບເຫັນ ການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດ SDG ທີ່ໄດ້ສົ່ງໃຫ້ກອງເລຂາຄະນະຊີ້ນຳລະດັບຊາດເພື່ອສັງລວມ ມີເນື້ອໃນທີ່ຈຳກັດ, ມີລັກສະນະລວມໆ, ບໍ່ໄດ້ຕີລາຄາໝາກຜົນຂອງການຈັດຕັ້ງປະຕິບັດບັນດາແຜນງານ ແລະ ໂຄງການທີ່ພົວພັນກັບ SDG ຕາມຂອບສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ;

5. ກວດສອບເຫັນ ການພັດທະນາຂໍ້ມູນສະຖິຕິ ທີ່ເປັນພື້ນຖານໃນການປະເມີນການຈັດຕັ້ງປະຕິບັດ SDG ຍັງມີສິ່ງທ້າທາຍໃນການວັດແທກໃນລະດັບ Tier II ແລະ Tier III;

6. ກວດສອບເຫັນ ການສ້າງແຜນດຳເນີນງານ SDG ທີ່ກຳນົດບັນດາກິດຈະກຳການເຄື່ອນໄຫວຂອງກອງເລຂາຄະນະຊີ້ນຳລະດັບຊາດ ຍັງບໍ່ທັນສຳເລັດສົມບູນ.

## II. ມາດຕະການແນະນຳປັບປຸງແກ້ໄຂຜົນການກວດສອບ.

ເພື່ອແກ້ໄຂຜົນການກວດສອບ ສະເໜີໃຫ້ ກອງເລຂາຄະນະຊີ້ນຳລະດັບຊາດ ພິຈາລະນາປະຕິບັດຕາມມາດຕະການແນະນຳ ດັ່ງນີ້:

**1. ການເຊື່ອມສານ SDG.**

ສະເໜີໃຫ້ກອງເລຂາຄະນະຊີ້ນຳລະດັບຊາດ ຮ່ວມກັບບັນດາຈຸດປະສານງານຕ່າງໆ ໃນຂັ້ນສູນກາງ ສືບຕໍ່ສ້າງແຜນກຳນົດບັນດາຄາດໝາຍ, ເປົ້າໝາຍຍ່ອຍ, ຕົວຊີ້ບອກຂອງ SDG ທີ່ເຫັນວ່າຍັງບໍ່ທັນໄດ້ຮັບການເຊື່ອມສານ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII, ໂດຍສືບຕໍ່ເຊື່ອມສານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ5 ປີ ຄັ້ງທີ IX ແລະ X ໃຫ້ສຳເລັດໄດ້ທຸກຕົວ, ຮັບປະກັນໃຫ້ມີຄວາມສອດຄ່ອງ ແລະ ກົມກຽວດ້ານນະໂຍບາຍລະຫວ່າງຂະແໜງການ. ພ້ອມກັນນັ້ນ, ກໍ່ໃຫ້ພິຈາລະນາດຳເນີນການສະຫຼຸບການກຳນົດຕົວຊີ້ບອກສຳລັບບັນດາກະຊວງ ໃຫ້ສຳເລັດໂດຍໄວ ແລະ ປະສານກັບບັນດາຂະແໜງການສາຍຕັ້ງໃນຂັ້ນທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດບັນດາແຜນງານ ແລະ ໂຄງການທີ່ຖືກຮັບຮອງໃຫ້ທັນຕາມກຳນົດເວລາອັນສົມຄວນ ແລະ ເຮັດໃຫ້ການເຊື່ອມສານເປັນໄປຕາມລະດັບຄາດໝາຍ, ມີຄວາມກົມກຽວ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາຂອງກະຊວງຂະແໜງການໃນແຕ່ລະໄລຍະ ແຕ່ນີ້ຈົນຮອດປີ 2030

ຕາມໄດ້ກຳນົດໄວ້ໃນມາດຕາ 2, ຂໍ້ 1 ແລະ ຂໍ້ 2 ຂອງລັດຖະດຳລັດ ຂອງປະທານປະເທດ **ສະບັບເລກທີ 206/ປປທ, ລົງວັນທີ 20 ກັນຍາ 2017** ແລະ ມາດຕາ 6 ຂໍ້ 4 ຂອງດຳລັດວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ປະຈຳປີ 2019 **ສະບັບເລກທີ 560/ນຍ, ລົງວັນທີ 31 ທັນວາ 2018**;

**2. ການເຜີຍແຜ່ SDG**

ສະເໜີໃຫ້ກອງເລຂາຄະນະຊີ້ນຳລະດັບຊາດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ລະດົມທຶນທັງພາຍໃນ ແລະ ພາຍນອກ ແລະ ສ້າງແຜນກິດຈະກຳສຳລັບການເຜີຍແຜ່, ໂຄສະນາ ແລະ ປະຊາສຳພັນໃຫ້ແກ່ປະຊາຊົນບັນດາເຜົ່າທົ່ວປະເທດ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບ SDG ໃຫ້ທົ່ວເຖິງດ້ວຍຮູບການລະດົມການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງພາກເອກະຊົນ ພາຍໃນ ແລະ ຕ່າງປະເທດ ໃຫ້ຫຼາຍຂຶ້ນ ພ້ອມທັງຍົກລະດັບ ແລະ ຂະຫຍາຍຂອບເຂດການເຜີຍແຜ່ໂຄສະນາໃຫ້ກ້ວາງຂວາງຂຶ້ນກວ່າເກົ່າ, ເຮັດໃຫ້ທຸກພາກສ່ວນໃນສັງຄົມມີຄວາມຮັບຮູ້, ເຂົ້າໃຈຕໍ່ແນວທາງ ແລະ ນະໂຍບາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເວົ້າລວມ; ເວົ້າສະເພາະ ແມ່ນ SDG ເພື່ອເປັນການຊຸກຍູ້ ແລະ ສົ່ງເສີມໃຫ້ທຸກພາກສ່ວນໃນສັງຄົມໄດ້ນຳເອົາແນວຄວາມຄິດ ແລະ ນະໂຍບາຍຂອງລັດທີ່ມີຕໍ່ SDG ມາຜັນຂະຫຍາຍເຂົ້າໃນການປະຕິບັດວຽກງານຂອງຕົນ, ພ້ອມທັງແນ່ໃສ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ກໍຄືການຈັດຕັ້ງປະຕິບັດ SDG ທີ່ຕິດພັນກັບເປົ້າໝາຍຕ່າງໆໃຫ້ສາມາດບັນລຸໄດ້ຕາມກອບເວລາ ແລະ ຄາດໝາຍທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂໍ້ 3 ຂອງຂໍ້ຕົກລົງ **ສະບັບເລກທີ 7518/ຫປທ, ລົງວັນທີ 10 ຕຸລາ 2017** ທີ່ໄດ້ກຳນົດໄວ້;

**3. ການສ້າງຂີດຄວາມສາມາດ.**

ສະເໜີໃຫ້ກອງເລຂາຄະນະຊີ້ນຳລະດັບຊາດ ພິຈາລະນາກຳນົດແຜນຍຸດທະສາດ ແລະ ແຜນປະຕິບັດງານເປັນແຕ່ລະໄລຍະໃນການສ້າງຄວາມເຂັ້ມແຂງດ້ານວິຊາການໃຫ້ພະນັກງານ ແລະ ບັນດາຈຸດປະສານງານ ທີ່ຂຶ້ນກັບບັນດາກະຊວງ-ອົງການ ເພື່ອເປັນບ່ອນອີງເຂົ້າໃນການລະດົມການຊ່ວຍເຫຼືອດ້ານວິຊາການ ຈາກອົງການຈັດຕັ້ງສາກົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ແນ່ໃສ່ຮັບປະກັນເຮັດໃຫ້ການປະສານງານ, ການຕິດຕາມ, ກວດກາ, ປະເມີນ ແລະ ການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດ SDG ໃນຂອບເຂດທົ່ວປະເທດ ໃຫ້ມີປະສິດທິພາບ ແລະ ທັນກຳນົດເວລາ ຕາມມາດຕາ 2 ຂໍ້ 2 ຂອງ**ຂໍ້ຕົກລົງ ສະບັບເລກທີ 7518/ຫປທ, ລົງວັນທີ 10 ຕຸລາ 2017** ທີ່ໄດ້ກຳນົດໄວ້;

**4. ການຕິດຕາມກວດກາ ແລະ ລາຍງານ.**

ສະເໜີໃຫ້ກອງເລຂາ ຄະນະຊີ້ນຳລະດັບຊາດ, ບັນດາກະຊວງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ພິຈາລະນາຄົ້ນຄວ້າກົນໄກການປະສານງານ ເພື່ອຕິດຕາມ, ກວດກາ ແລະ ລາຍງານໃຫ້ມີຄວາມຄົບຖ້ວນ, ລະອຽດ ແລະ ສາມາດປະເມີນຜົນການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການ SDG ໄດ້ຢ່າງຖືກຕ້ອງ ແລະ ຊັດເຈນຂຶ້ນກວ່າເກົ່າ ເພື່ອຊ່ວຍເຮັດໃຫ້ການຕິດຕາມ, ກວດກາ ແລະ ລາຍງານສາມາດຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ຕາມມາດຕາ 2 ຈໍ້ 2 ຂອງຂໍ້ຕົກລົງ**ສະບັບເລກທີ 7518/ຫປທ, ລົງວັນທີ 10 ຕຸລາ 2017** ທີ່ໄດ້ກຳນົດໄວ້ ແລະ ມາດຕາ 4 ຂີດໜ້າ 10 ຂອງດຳລັດວ່າດ້ວຍ ການຈັດຕັ້ງປະຕິບັດແຜນ

ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈໍາປີ 2017 **ສະບັບເລກທີ 445/ນຍ, ລົງວັນທີ 19 ທັນວາ 2016**;

**5. ການກໍານົດຕົວຊີ້ບອກ.**

ສະເໜີໃຫ້ກອງເລຂາຄະນະຊີ້ນໍາລະດັບຊາດ ແລະ ຄະນະຜູ້ຊ່ຽວຊານທີ່ກ່ຽວຂ້ອງ ຮ່ວມກັບ ບັນດາກະຊວງຂະແໜງການ ສືບຕໍ່ການກໍານົດຕົວຊີ້ບອກ ທີ່ຍັງບໍ່ທັນສາມາດລະບຸພາກສ່ວນຮັບຜິດຊອບໄດ້ໃຫ້ສໍາເລັດ ເພື່ອສາມາດຮັບຮອງນໍາໃຊ້ ແລະ ເປັນບ່ອນອີງໃຫ້ບັນດາກະຊວງ, ອົງການ, ຂະແໜງການຂັ້ນທ້ອງຖິ່ນ ໃນການຕິດຕາມ, ກວດກາ, ຊຸກຍູ້ ແລະ ລາຍງານຜົນການຈັດຕັ້ງປະຕິບັດບັນດາແຜນງານ ແລະ ໂຄງການ SDG ທີ່ນອນໃນຄວາມຮັບຜິດຊອບຂອງຕົນໃຫ້ມີຄວາມຊັດເຈນ ແລະ ທັນກໍານົດເວລາ ຕາມມາດຕາ 2 ຂໍ້ 2 ຂອງລັດຖະດໍາລັດ ຂອງປະທານປະເທດ ສະບັບເລກທີ 206/ປປທ, ລົງວັນທີ 20 ກັນຍາ 2017 ແລະ ມາດຕາ 6 ຂໍ້ 4 ຂອງດໍາລັດວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ປະຈໍາປີ 2019 ສະບັບເລກທີ 560/ນຍ, ລົງວັນທີ 31 ທັນວາ 2018.

**6. ການສ້າງແຜນດໍາເນີນງານແຫ່ງຊາດ ໃນການຈັດຕັ້ງປະຕິບັດວາລະປີ 2030 ເພື່ອການພັດທະນາແບບຍືນຍົງ**

ສະເໜີໃຫ້ກອງເລຂາຄະນະຊີ້ນໍາລະດັບຊາດ ພິຈາລະນາສືບຕໍ່ປັບປຸງ ແລະ ສ້າງແຜນປະຕິບັດງານແຫ່ງຊາດ ໃນການຈັດຕັ້ງປະຕິບັດວາລະປີ 2030 ເພື່ອການພັດທະນາແບບຍືນຍົງ ຢູ່ ສປປ ລາວ **(National Roadmap for the Implementation of the 2030 agenda for Sustainable Development)** ໃຫ້ສໍາເລັດໂດຍກໍານົດຢ່າງຈະແຈ້ງບັນດາກິດຈະກໍາທີ່ຈະຈັດຕັ້ງປະຕິບັດໃນຕໍ່ໜ້າບົນພື້ນຖານຊັບພະຍາກອນທີ່ມີ. ສໍາຄັນ ແມ່ນກໍານົດໄລຍະເວລາໃນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດຢ່າງຈະແຈ້ງ ເພື່ອເປັນເຄື່ອງມືໃນການຊຸກຍູ້ພາກສ່ວນຕ່າງໆ ທີ່ປະຕິບັດບັນດາແຜນງານ ແລະ ໂຄງການ ກ່ຽວກັບ SDG ແລະ ຮັບປະກັນໝາກຜົນຂອງການຈັດຕັ້ງປະຕິບັດໃຫ້ສາມາດບັນລຸຕາມລະດັບຄາດໝາຍ ຕາມມາດຕາ 2 ຂໍ້ 1 ຂອງລັດຖະດໍາລັດ ຂອງປະທານປະເທດ ສະບັບເລກທີ 206/ປປທ, ລົງວັນທີ 20 ກັນຍາ 2017.